TOkLONG (H.KH )

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ລັດວິສາຫະກິດ ຫວຍພັດທະນາ

ເລກທີ 367/ຫພນ.

ນະຄອນຫຼວງວຽງຈັນ,ວັນທີ 17 MAY 2010 .

# ຂໍ້ຕົກລົງ

## ກ່ຽວກັບການແຕ່ງຕັ້ງຕົວແທນຈໍາໜ່າຍ ໃບຫວຍຂູດ ຢູ່ນະຄອນຫລວງວຽງຈັນເລກ 1

- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ແຫ່ງ ສປປລາວ ສະບັບເລກທີ 70/ນຍ,ລົງວັນທີ 01/07/2008 ວ່າດ້ວຍການຄຸ້ມຄອງກິດຈະການຫວຍ

- ອີງຕາມ ຂໍ້ຕົກລົງຂອງທ່ານລັດຖະມົນຕີ ວ່າການກະຊວງການເງິນ ສະບັບເລກທີ 1026/ກງ,ລົງວັນທີ12/6/2003 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວທຸລະກິດ ຂອງລັດວິສາຫະກິດຫວຍພັດທະນາ.

- ອີງຕາມ ຄໍາສັ່ງແນະນໍາຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 1332/ກງ,ລົງວັນທີ 17/06/2009 ວ່າດ້ວຍການຄຸ້ມຄອງກິດຈະການຫວຍ.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 1010/ກງ, ລົງວັນທີ 11/05/2010 ວ່າດ້ວຍການຂາຍຍົກຂາດຕົວໃບຫວຍຂູດ ໃຫ້ບໍລິສັດເມກາເມເນເຈີເມັນ ເປັນຕົວແທນຈໍາໜ່າຍໃບຫວຍຂູດຮັບໄປຈໍາໜ່າຍ ໃນທົ່ວປະເທດ.

- ອີງຕາມ ການເຫັນດີຂອງຄະນະອໍານວຍການ ຄັ້ງວັນທີ 12/05/2010.

## ຜູ້ອໍານວຍການອອກຂໍ້ຕົກລົງ:

<u>ມາດຕາ 1</u>: ເຫັນດີ ອະນຸມັດ ແຕ່ງຕັ້ງຕົວແທນຈໍາໜ່າຍໃບຫວຍຂູດ ຢູ່ ນະຄອນຫລວງວຽງຈັນ ເລກ 1 ຂຶ້ນ, ໂດຍແມ່ນ ທ່ານ ນາງ ວິໄລຄໍາ ສີພັນດອນ ຜູ້ອໍານວຍການ ບໍລິສັດເມກາເມເນເຈີເມັນເປັນຫົວໜ້າຕົວແທນຈໍາໜ່າຍໃບຫວຍຂູດ ເພື່ອຮັບເໝົາຈໍາໜ່າຍໃນທົ່ວປະເທດໂດຍກົງ ກັບລັດວິສາຫະກິດ ຫວຍພັດທະນາ.ເວລາຈັດຕັ້ງປະຕິບັດຕົວຈິງ ໃຫ້ສົມທົບກັບອໍານາດການປົກຄອງແຂວງ, ພະແນກການເງິນແຂວງ, ຫ້ອງການການເງິນລັດວິສາຫະກິດ ( ຫ້ອງການຄຸ້ມຄອງຊັບສິນຂອງລັດ) ເພື່ອອໍານວຍຄວາມສະດວກໃນການຈໍາໜ່າຍ.

<u>ມາດຕາ 2</u>: ມອບໃຫ້ພະແນກການຕະຫລາດ,ທຸກພາກສ່ວນທີ່ກ່ຽວຂ້ອງ, ຜູ້ທີ່ຖືກແຕ່ງຕັ້ງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໃຫ້ຖືກຕ້ອງຕາມພາລະບົດບາດຂອງໃຜລາວ.

<u>ມາດຕາ 3</u>: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດໃຊ້ໄດ້ເປັນທາງການ ນັບແຕ່ວັນທີ 11 ພຶດສະພາ ປີ 2010 ເປັນຕົ້ນໄປ.

ຜູ້ອໍານວຍການ,

ລັດວິສາຫະກິດ ຫວຍພັດທະນາ

ຄໍາເພັງ ທິມມະກອນ

TOkLONG.H.Lak 4 to. 5 to.2012doc.doc

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ບໍລິສັດລັດ ວິສາຫະກິດ ຫວຍພັດທະນາ

ເລກທີ 344 /ຫພນ

ນະຄອນຫຼວງວຽງຈັນ, ວັນທີ 27 APR 2012

## ຂໍ້ຕົກລົງຂອງຜູ້ອຳນວຍການ

### ວ່າດ້ວຍການຈຳໜ່າຍໃບຫວຍພັດທະນາ ເລກ 4 ໂຕ ຕິດພັນເລກທ້າຍ 2 ໂຕ, 3 ໂຕ ດ້ວຍເຄື່ອງຈັກເອເລັກໂຕຼນິກ

- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີແຫ່ງ ສ ປ ປ ລາວ ສະບັບເລກທີ 70/ນຍ, ລົງວັນທີ 01/07/2008 ວ່າດ້ວຍການຄຸ້ມຄອງກິດຈະການຫວຍ.

- ອີງຕາມ ຂໍ້ຕົກລົງຂອງທ່ານລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 1026/ກງ, ລົງວັນທີ 12/6/2003 ວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວທຸລະກິດ ຂອງລັດວິສາຫະກິດ ຫວຍພັດທະນາ.

- ອີງຕາມ ຄຳສັ່ງແນະນຳຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ1332/ກງ, ລົງວັນທີ 17/06/09 ກ່ຽວກັບການຄຸ້ມຄອງກິດຈະການຫວຍ.

- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 1437/ກງ, ລົງວັນທີ 17/01/2011 ວ່າດ້ວຍການຈຳໜ່າຍໃບຫວຍເລກ 4 ໂຕ, 5 ໂຕ ໃນທົ່ວປະເທດຂອງຕົວແທນຈຳໜ່າຍຫວຍຊູດ ນະຄອນຫຼວງວຽງຈັນ ເລກ 1.

- ອີງຕາມການເຫັນດີຂອງກອງປະຊຸມຜູ້ຖືຮຸ້ນຂອງລັດ ສະໄໝສາມັນ ຄັ້ງທີ II ວັນທີ 02/04/2012.

- ອີງຕາມການເຫັນດີຂອງຄະນະອຳນວຍການ ຄັ້ງວັນທີ 25/04/2012.

## ຜູ້ອຳນວຍການຕົກລົງ:

<u>ມາດຕາ 1</u>: ເຫັນດີ ໃຫ້ຕົວແທນຈຳໜ່າຍ ຫວຍຊູດ ນະຄອນຫຼວງວຽງຈັນ ເລກ 1 ໂດຍແມ່ນ ທ່ານ ນ. ວິໄລຄຳ ສີພັນດອນ ເປັນຫົວໜ້າຕົວແທນຈຳໜ່າຍ ຊື້-ຂາຍຍົກຂາດຕົວ ໃນການຈຳໜ່າຍໃບຫວຍເລກ 4 ໂຕຕິດພັນ ເລກທ້າຍ 2 ໂຕ, 3 ໂຕ ດ້ວຍເຄື່ອງຈັກເອເລັກໂຕຼນິກ ກັບ ບໍລິສັດລັດ ວິສາຫະກິດ ຫວຍພັດທະນາ ຕາມລະບຽບການ.

<u>ມາດຕາ 2</u>: ມອບໃຫ້ພະແນກການຕະຫລາດ, ທຸກພາກສ່ວນທີ່ກ່ຽວຂ້ອງ, ຜູ້ທີ່ຖືກແຕ່ງຕັ້ງຈົ່ງຮັບຮູ້ແລະພ້ອມກັນຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ຖືກຕ້ອງຕາມພາລະບົດບາດຂອງໃຜລາວ.

<u>ມາດຕາ 3</u>: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດໃຊ້ໄດ້ເປັນທາງການ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຜູ້ອຳນວຍການ,

ກະຊວງການເງິນ ບໍລິສັດ ລັດວິສາຫະກິດ ຫວຍພັດທະນາ LAO LOTTERY ນະຄອນຫຼວງວຽງຈັນ

ຄຳເພັງ ທິບນະກອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ກົມຄຸ້ມຄອງການເງິນລັດວິສາຫະກິດ

ເລກທີ 0722 /ກງ-ກງລ
ນະຄອນຫຼວງວຽງຈັນ, ວັນທີ 21 JUN 2011

# ສະໂນດນຳສົ່ງ

ເຖິງ : ທ່ານ ຜູ້ອຳນວຍການ ລັດວິສາຫະກິດຫວຍພັດທະນາ ທີ່ນັບຖື.
ເລື່ອງ: ນຳສົ່ງເອກະສານ.

ກົມຄຸ້ມຄອງການເງິນລັດວິສາຫະກິດ ຂໍຖືເປັນກຽດນຳສົ່ງເອກະສານມາຍັງທ່ານດັ່ງນີ້ :

| ລ/ດ | ເນື້ອໃນ | ຈຳນວນ | ໝາຍເຫດ |
|---|---|---|---|
| 1 | - ຂໍ້ຕົກລົງວ່າດ້ວຍການຈຳໜ່າຍໃບຫວຍເລກ 4 ໂຕ, 5 ໂຕ ໃນທົ່ວປະເທດຂອງຕົວແທນຈຳໜ່າຍຫວຍຊຸດນະຄອນຫຼວງວຽງຈັນ ເລກ 1 | 1 ສະບັບ | |

ດັ່ງນັ້ນ, ຈຶ່ງຂໍສົ່ງເອກະສານດັ່ງກ່າວມາຍັງທ່ານເພື່ອພິຈາລະນາຕາມທາງຄວນດ້ວຍ.

ຫົວໜ້າກົມຄຸ້ມຄອງການເງິນລັດວິສາຫະກິດ,

ສິດທິສອນ ເທບພາສີ
Sithisone THEPPHASY

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງ ການເງິນ

ຫ້ອງການ

ເລກທີ 2160/ກງ.ຫກ

ນະຄອນຫຼວງວຽງຈັນ, ວັນທີ 27 SEP 2012

# ແຈ້ງການ

ເຖິງ : ຫົວໜ້າພະແນກການເງິນປະຈຳນະຄອນຫຼວງ ແລະ ບັນດາແຂວງ.

ເລື່ອງ : ການຈຳໜ່າຍໃບຫວຍເລກ 4ໂຕ ຕິດພັນເລກທ້າຍ 2ໂຕ ແລະ 3ໂຕ ໃນທົ່ວປະເທດ ຂອງຕົວແທນຈຳໜ່າຍຫວຍຊູດ ນະຄອນຫຼວງ ເລກ 1.

ອີງຕາມ:
- ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ສະບັບເລກທີ 70/ນຍ, ລົງວັນທີ 01/07/2008 ວ່າດ້ວຍການຄຸ້ມຄອງກິດຈະການຫວຍ.
- ຄຳສັ່ງແນະນຳຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 1332/ກງ, ລົງວັນທີ 17/06/2009 ກ່ຽວກັບການຄຸ້ມຄອງກິດຈະການຫວຍ.
- ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 1437/ກງ, ລົງວັນທີ 17/06/2011 ວ່າດ້ວຍການຈຳໜ່າຍໃບຫວຍ ເລກ 4ໂຕ ໃນທົ່ວປະເທດ ຂອງຕົວແທນຈຳໜ່າຍ ຫວຍຊູດ ນະຄອນຫຼວງວຽງຈັນ ເລກ 1.

ຫ້ອງການ ກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງ ທ່ານຫົວໜ້າພະແນກການເງິນ ປະຈຳນະຄອນຫຼວງວຽງຈັນ ແລະ ບັນດາແຂວງຊາບວ່າ : ກະຊວງການເງິນໄດ້ອອກຂໍ້ຕົກລົງ ສະບັບເລກທີ 1437/ກງ, ລົງວັນທີ 17/06/2011 ວ່າດ້ວຍການຈຳໜ່າຍໃບຫວຍ ເລກ 4 ໂຕ ຂອງຕົວແທນຈຳໜ່າຍ ຫວຍຊູດນະຄອນຫຼວງ ເລກ 1 (ບໍລິສັດ ເມກາເນເນເຈີເມັນ ຈຳກັດຜູ້ດຽວ) ເພື່ອປະກອບສ່ວນສ້າງລາຍຮັບເຂົ້າງົບປະມານໃຫ້ລັດຫຼາຍຂຶ້ນ, ສະນັ້ນ ຈຶ່ງແຈ້ງມາຍັງບັນດາ ທ່ານຮັບຊາບ ແລະ ໃຫ້ການຊ່ວຍເຫຼືອຮ່ວມມືອຳນວຍຄວາມສະດວກໃນເວລາຈັດຕັ້ງປະຕິບັດການຈຳໜ່າຍ, ພ້ອມດຽວກັນນັ້ນຂໍໃຫ້ທ່ານລາຍງານໃຫ້ອຳນາດການປົກຄອງແຂວງຮັບຊາບ ແລະ ໃຫ້ການຄຸ້ມຄອງຕາມລະບຽບການດ້ວຍ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

ຫົວໜ້າ ຫ້ອງການກະຊວງການເງິນ

ບຸນຊຸ່ມ ສີສະຫວັດ

TOKLONG(LMT).HK.1(1)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 1437 /ກງ.

ນະຄອນຫຼວງວຽງຈັນ, ວັນທີ 17 JUN 2011

# ຂໍ້ຕົກລົງ

## ວ່າດ້ວຍການຈຳໜ່າຍໃບຫວຍເລກ 4 ໂຕ, ເລກ 5 ໂຕ ໃນທົ່ວປະເທດຂອງຕົວແທນຈຳໜ່າຍຫວຍຊູດນະຄອນຫລວງວຽງຈັນ ເລກ 1

- **ອີງຕາມ:** ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 80/ນຍ, ລົງວັນທີ 28/02/2007 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງການເງິນ.
- **ອີງຕາມ:** ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ແຫ່ງ ສ ປ ປ ລາວ ສະບັບເລກທີ 70/ນຍ, ລົງວັນທີ 01/7/2008 ວ່າດ້ວຍການຄຸ້ມຄອງກິດຈະການຫວຍ.
- **ອີງຕາມ:** ຄຳສັ່ງແນະນຳຂອງລັດຖະມົນຕີ ວ່າການກະຊວງການເງິນ ສະບັບເລກທ 1332/ກງ, ລົງວັນທີ 12/06/2003 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວທຸລະກິດຂອງລັດວິສາຫະກິດຫວຍພັດທະນາ.
- **ອີງຕາມ:** ການເຫັນດີຂອງກອງປະຊຸມສະພາບໍລິຫານ ສະໄໝສາມັນຄັ້ງທີ XXXVIII, ລົງວັນທີ 27/9/2010.
- **ອີງຕາມ:** ການສະເໜີ ຂອງ ບໍລິສັດລັດວິສາຫະກິດ ຫວຍພັດທະນາ ສະບັບເລກທີ 4:7/ຫພນ, ລົງວັນທີ 01/6/2011.
- **ອີງຕາມ:** ການຄົ້ນຄ້ວາຂອງກົມຄຸ້ມຄອງການເງິນລັດວິສາຫະກິດ ສະບັບເລກທີ: 0646/ກງ.ກງລ, ລົງວັນທີ: . 03/06/2011.

### ລັດຖະມົນຕີວ່າການກະຊວງການເງິນຕົກລົງ :

<u>ມາດຕາ 1</u>: ເຫັນດີໃຫ້ບໍລິສັດລັດ ວິສາຫະກິດຫວຍພັດທະນາຈຳໜ່າຍໃບຫວຍພັດທະນາ ເລກ 4 ໂຕ, 5ໂຕ ໃນທົ່ວປະເທດ ໂດຍມອບໃຫ້ຕົວແທນຈຳໜ່າຍຫວຍຊູດນະຄອນຫລວງວຽງຈັນ ເລກ 1 ( ບໍລິສັດເມກາເນເຈີເມັນຈຳກັດຜູ້ດຽວ) ເປັນຜູ້ຮັບຜິດຊອບ ຊື້-ຂາຍຍົກຂາດຕົວຈາກບໍລິສັດລັດ ວິສາຫະກິດ ຫວຍພັດທະນາ ຕາມລະບຽບການ.

<u>ມາດຕາ 2</u> : ມອບໃຫ້ຫ້ອງການກະຊວງ, ກົມຄຸ້ມຄອງການເງິນລັດວິສາຫະກິດ,ບໍລິສັດລັດ ວິສາຫະກິດ ຫວຍພັດທະນາ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະສະບັບນີ້ ຢ່າງເຂັ້ມງວດ.

<u>ມາດຕາ 3</u> : ຂໍ້ຕົກລົງສະບັບນີ້ ມີຜົນສັກສິດໃຊ້ໄດ້ເປັນທາງການນັບຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງການເງິນ.

ສົມດີ ດວງດີ

CHENGKAN.H.4 To.2012doc.doc

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ບໍລິສັດລັດ ວິສາຫະກິດ ຫວຍພັດທະນາ

ເລກທີ 882/ທພນ

ນະຄອນຫລວງວຽງຈັນ, ວັນທີ 02 OCT 2012

# ແຈ້ງການ

**ເຖິງ** : ທີ່ວໜ້າຕົວແທນຈຳໜ່າຍ ຫວຍພັດທະນາ ຢູ່ນະຄອນຫຼວງ ແລະ ບັນດາແຂວງ.

**ເລື່ອງ** : ກ່ຽວກັບການຈຳໜ່າຍໃບຫວຍ ເລກ 4 ໂຕ ຂາຍຕິດພັນ ເລກທ້າຍ 2 ໂຕ 3 ໂຕ ຂອງຕົວແທນຈຳໜ່າຍຫວຍຊູດ ນະຄອນຫຼວງວຽງຈັນ ເລກ 1 ໃນທົ່ວປະເທດ.

ອີງຕາມ:
- ຂໍ້ຕົກລົງ ຂອງນາຍົກລັດຖະມົນຕີ ແຫ່ງ ສ ປ ປ ລາວ ສະບັບເລກທີ 70/ນຍ, ລົງວັນທີ 01/07/08 ວ່າດ້ວຍການຄຸ້ມຄອງກິດຈະການຫວຍ.
- ຂໍ້ຕົກລົງ ຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 1026/ກງ, ລົງວັນທີ 12/06/2003 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວທຸລະກິດຂອງ ລັດວິສາຫະກິດ ຫວຍພັດທະນາ.
- ຂໍ້ຕົກລົງ ຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 1437/ກງ, ລົງວັນທີ 17/06/2011 ວ່າດ້ວຍການຈຳໜ່າຍໃບຫວຍ ເລກ 4 ໂຕ, ເລກ 5 ໂຕ ໃນທົ່ວປະເທດຂອງຕົວແທນຈຳໜ່າຍຫວຍຊູດ ນະຄອນຫຼວງວຽງຈັນ ເລກ 1.
- ກອງປະຊຸມຜູ້ຕາງໜ້າຜູ້ຖືຮຸ້ນຂອງລັດສະໄໝສາມັນ ຄັ້ງທີ II ລົງວັນທີ 02/04/2012.
- ຂໍ້ຕົກລົງຂອງຜູ້ອຳນວຍການ ສະບັບເລກທີ 344/ທພນ, ລົງວັນທີ 27/04/2012 ວ່າດ້ວຍ ການຈຳໜ່າຍໃບຫວຍພັດທະນາ ເລກ 4 ໂຕ ຕິດພັນເລກທ້າຍ 2 ໂຕ, 3 ໂຕ ດ້ວຍເຄື່ອງຈັກເອເລັກໂຕຼນິກ.
- ການເຫັນດີເປັນເອກະພາບຂອງຄະນະອຳນວຍການ ຄັ້ງວັນທີ 24/09/2012.

ບໍລິສັດລັດ ວິສາຫະກິດ ຫວຍພັດທະນາ ແຈ້ງການມາຍັງບັນດາທ່ານ ທີ່ວໜ້າຕົວແທນຈຳໜ່າຍຫວຍພັດ ທະນາ ຢູ່ນະຄອນຫຼວງ ແລະ ບັນດາແຂວງ ຊາບວ່າ : ເພື່ອປະຕິບັດຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 1437/ກງ,ລົງວັນທີ 17/06/2011 ແລະ ຜົນກອງປະຊຸມຜູ້ຕາງໜ້າຜູ້ຖືຮຸ້ນຂອງລັດສະໄໝສາມັນຄັ້ງທີ II, ລົງວັນທີ 02/04/2012 ຕົວແທນຈຳໜ່າຍຫວຍຊູດນະຄອນຫຼວງເລກ 1 ຈະໄດ້ຈຳໜ່າຍໃບຫວຍເລກ 4 ໂຕ ຂາຍຕິດພັນເລກ 2ໂຕ ແລະ 3ໂຕ ເພື່ອຕອບສະໜອງຄວາມຮຽກຮ້ອງ ຕ້ອງການ ຂອງຜູ້ມັກສຽງໂຊກຊີງລາງວັນ ກັບໃບຫວຍຜະລິດຕະພັນຫວຍຊະນິດໃໝ່ ສະນັ້ນ, ຖ້າຫາກຕົວແທນ ຈຳໜ່າຍໃດມີຄວາມຕ້ອງການຢາກຮັບເອົາໃບຫວຍ ເລກ 4 ໂຕ ຂາຍຕິດພັນ ເລກ 2 ໂຕ 3 ໂຕ ໄປຈຳໜ່າຍ ຕາມເງື່ອນໄຂຄວາມສາມາດຂອງຕົນ ແລະ ລະບຽບການຈຳໜ່າຍໃບຫວຍນັ້ນ ໃຫ້ຕິດຕໍ່ພົວພັນນຳຕົວແທນຈຳໜ່າຍຫວຍຊູດນະຄອນຫຼວງວຽງຈັນ ເລກ 1 ຕາມເບີໂທ **021 243 407.**

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ.

ກະຊວງການເງິນ ບໍລິສັດ ລັດວິສາຫະກິດ ຫວຍພັດທະນາ LAO LOTTERY ນະຄອນຫລວງວຽງຈັນ

ສຸບັນ ເພຍສັກຂາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----------------------------

# ໃບທະບຽນວິສາຫະກິດ

ຕົ້ນສະບັບ

ເລກທີ 4025 7/ທຈທ



- ອີງຕາມກົດໝາຍວ່າດ້ວຍວິສາຫະກິດເລກທີ່11/ສພຊ,ລົງວັນທີ 09/11/2005.
- ອີງຕາມໃບຄໍາຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ,ລົງວັນທີ 27/03/2009

ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດປະຈໍານະຄອນຫຼວງ( ກົມການຄ້າພາຍໃນ, ກະຊວງອຸດສາຫະກໍາ ແລະ ການຄ້າ) ໄດ້ຂຶ້ນທະບຽນວິສາຫະກິດໃຫ້ແກ່: ນາງ ວິໄລຄໍາ ສີພັນດອນ

ສັນຊາດ: ລາວ ຊຶ່ງເປັນ ຜູ້ຈັດການ ຂອງວິສາຫະກິດ:

- ຊື່ວິສາຫະກິດ: ບໍລິສັດ ເມກາເມເນເຈີເມັນ ຈໍາກັດຜູ້ດຽວ
- ຊື່ວິສາຫະກິດ ເປັນພາສາສາກົນ:
- ຮູບການ ຫຼື ຮູບແບບວິສາຫະກິດ: ບໍລິສັດ ຈໍາກັດຜູ້ດຽວ
- ທຶນຈົດທະບຽນ: 5,100,000,000 ກີບ (ຫ້າຕື້ໜຶ່ງຮ້ອຍລ້ານກີບ)
- ທີ່ຕັ້ງສໍານັກງານ:ຖະໜົນ ແຫ່ງບຸນ ,ບ້ານ ຫາຍໂສກ
- ເມືອງ ຈັນທະບູລີ ແຂວງ ນະຄອນຫຼວງວຽງຈັນ
- ປະເພດທຸລະກິດ (ໄດ້ບົ່ງໄວ້ດ້ານຫຼັງ).

| | | |
|---|---|---|
| 01-00006110 | 451 6 | (S/1) |

ຄໍາແນະນໍາ

ດັດແກ້ທະບຽນເລກທີ 223/ອຄ.ນວ,09/04/2008
ປ່ຽນຜູ້ຈັດການຄົນໃໝ່
ເພື່ອໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍວິສາຫະກິດ

ທີ່ ນະຄອນຫຼວງວຽງຈັນ ,ວັນທີ 09 APR 2009

ເຈົ້າໜ້າທີ່ທະບຽນວິສາຫະກິດ

ນິວອນ ຍອຍສາຍຄໍາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ການເງິນ
ກົມສ່ວຍສາອາກອນ

ເລກທີ 0157 ກງ.ກສອ

ນະຄອນຫລວງວຽງຈັນ ວັນທີ 25 MAY 2012



# ໃບຢັ້ງຢືນການມອບພັນທະອາກອນ

## ປະຈຳປີ 2011

**ເລກປະຈຳຕົວຜູ້ເສຍອາກອນ 597896841-9-00 [010028335]**

- ອີງຕາມໃບທະບຽນວິສາຫະກິດ ສະບັບເລກທີ 4025/ທຈທ, ລົງວັນທີ 09 ເມສາ(04) 2009.
- ອີງຕາມບົດກວດກາໄລ່ລຽງ ເລກທີ 3391/ກງ.ກສອ, ລົງວັນທີ 03 ເມສາ(04) 2012.

ຢັ້ງຢືນວ່າ ທ່ານ ນາງ ວິໄລຄຳ ສີພັນດອນ ເຊິ່ງເປັນຜູ້ອຳນວຍການ ບໍລິສັດ ເມກາ ເມເນເຈີເມັນ ຈຳກັດຜູ້ດຽວ.
ຕັ້ງຢູ່ບ້ານ: ທາຍໂສກ, ເມືອງ: ຈັນທະບູລີ, ນະຄອນຫລວງວຽງຈັນ, ໂທລະສັບ: 021-243407.
ລາຍຮັບທຸລະກິດໃນປີ: 2.457.937.456 ກີບ, ແຜນລາຍຮັບໃນປີຕໍ່ໄປ: 2.500.000.000 ກີບ
ພັນທະອາກອນທີ່ໄດ້ມອບມີດັ່ງນີ້:

| ລຳດັບ | ປະເພດອາກອນ | ໄລຍະມອບອາກອນ | ຈຳນວນເງິນອາກອນທີ່ໄດ້ມອບ | ໝາຍເຫດ |
|---|---|---|---|---|
| 1 | ອາກອນມູນຄ່າເພີ່ມ | 01-12/2011 | 245,793,746 | |
| 2 | ອາກອນຊົມໃຊ້ | 01-12/2011 | 0 | |
| 3 | ອາກອນກຳໄລ | 01-12/2011 | 26,232,364 | |
| 4 | ອາກອນລາຍໄດ້ຈາກເງິນເດືອນ | 01-12/2011 | 72,180,025 | |
| 5 | ອາກອນລາຍໄດ້ອື່ນໆ | 01-12/2011 | 37,464,065 | |
| 6 | ອື່ນໆ | 01-12/2011 | 200,000 | |
| ລວມທັງໝົດ | | | **381,870,200** | |

- ລວມເງິນຂຽນເປັນຕົວໜັງສື: ສາມຮ້ອຍແປດສິບເອັດລ້ານ ແປດຮ້ອຍເຈັດສິບພັນ ສອງຮ້ອຍ ກີບ.

ດັ່ງນັ້ນ, ຈຶ່ງໄດ້ອອກໃບຢັ້ງຢືນການມອບອາກອນສະບັບນີ້ໄວ້ເປັນຫລັກຖານ

ໝາຍເຫດ: ອາກອນປະພດຕ່າງໆທີ່ໄດ້ມອບຂ້າງເທິງ ແມ່ນໄດ້ມາຈາກການແຈ້ງມອບປົກກະຕິ ແລະການກວດກາໄລ່ລຽງ ປະຈຳປີ 2011.

ຫົວໜ້າກົມ ສ່ວຍສາອາກອນ

ຄຳພາຍ ວົງສາຄຳຜຸຍ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກົມສ່ວຍສາອາກອນ

ພະແນກສ່ວຍສາອາກອນ

ເລກທີ 141 ພສອ.ນວ

ນະຄອນຫຼວງວຽງຈັນ, ວັນທີ 19 Mar 2013



# ໃບຢັ້ງຢືນການມອບພັນທະອາກອນ

## ປະຈຳປີ 2012

**ເລກປະຈຳຕົວຜູ້ເສຍອາກອນ: 597896841-9-00 [ 010028335 ]**

- ອີງຕາມໃບທະບຽນວິສາຫະກິດ ສະບັບເລກທີ 4025/ທຈທ, ລົງວັນທີ 09 ເມສາ ( 04 ) 2009.

**ຢັ້ງຢືນວ່າ:ທ່ານ ນາງ ວິໄລຄຳ ສີພັນດອນ ເປັນອຳນວຍການ ບໍລິສັດ ເມກາເມເນເຈີເມັນ ຈຳກັດຜູ້ດຽວ**

ຕັ້ງຢູ່ບ້ານ: ທາຍໂສກ, ເມືອງ: ຈັນທະບູລີ, ນະຄອນຫລວງວຽງຈັນ, ໂທລະສັບ: **021 243407**

ລາຍຮັບທຸລະກິດໃນປີ: **522.648.209** ກີບ, ແຜນລາຍຮັບໃນປີຕໍ່ໄປ: **550.000.000** ກີບ.

ພັນທະອາກອນທີ່ໄດ້ມອບມີດັ່ງນີ້:

| ລຳດັບ | ປະເພດອາກອນ | ໄລຍະມອບອາກອນ | ຈຳນວນເງິນອາກອນທີ່ໄດ້ມອບ | ໝາຍເຫດ |
|---|---|---|---|---|
| 1 | ອາກອນມູນຄ່າເພີ່ມ | 01-12/2012 | 42,749,454 | |
| 2 | ອາກອນຊົມໃຊ້ | 01-12/2012 | 0 | |
| 3 | ອາກອນຕໍ່າສຸດ+ອາກອນກຳໄລ | 01-12/2012 | 4,274,945 | |
| 4 | ອາກອນລາຍໄດ້ຈາກເງິນເດືອນ | 01-12/2012 | 45,879,183 | |
| 5 | ອາກອນ ແຮງງານ | 01-12/2012 | 0 | |
| 6 | ອາກອນລາຍໄດ້ | 01-12/2012 | 0 | |
| 7 | ອື່ນໆ | 01-12/2012 | 0 | |
| | ລວມທັງໝົດ | | **92,903,582** | |

- ລວມເປັນຕົວໜັງສື : **ເກົ້າສິບສອງລ້ານ ເກົ້າແສນສາມພັນ ຫ້າຮ້ອຍແປດສິບສອງ ກີບ.**

ດັ່ງນັ້ນ, ຈຶ່ງໄດ້ອອກໃບຢັ້ງຢືນການມອບອາກອນສະບັບນີ້ໄວ້ເປັນຫລັກຖານ

ໝາຍເຫດ:ອາກອນປະເພດຕ່າງໆທີ່ໄດ້ມອບຂ້າງເທິງແມ່ນໄດ້ມາຈາກການແຈ້ງມອບອາກອນປົກກະຕິຂອງບໍລິສັດ

ໃບຢັ້ງຢືນການມອບພັນທະອາກອນສະບັບນີ້ ເພື່ອນຳໃຊ້ປະກອບເອກະສານ ມາເຄື່ອນໄຫວທຸລະກິດ, ມີຜົນນຳໃຊ້ນັບແຕ່ 01 ມັງກອນ ຫາ 31 ທັນວາ 2013.

ຫົວໜ້າພະແນກ ສ່ວຍສາອາກອນ ປະຈຳ.ນວ

ພະແນກ ສ່ວຍສາອາກອນ

ຄຳຫຸ່ນ ທິພົມມະຈັນ